ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ເລກທີ 4392 /ກຊສ

ນະຄອນຫລວງວຽງຈັນ, ວັນທີ 25 ສິງຫາ 2022

# ຂໍ້ຕົກລົງ
# ວ່າດ້ວຍທຸລະກິດກ່ຽວກັບທີ່ດິນ

- ອີງຕາມ ມາດຕາ 156, 157 ແລະ 158 ຂອງກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 14 ກໍລະກົດ 2014;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 573/ນຍ, ລົງວັນທີ 20 ກັນຍາ 2021;
- ອີງຕາມ ໜັງສືສະເໜີຂອງກົມທີ່ດິນ ສະບັບເລກທີ 3307/ກຊສ.ກທດ, ລົງວັນທີ 6 ກໍລະກົດ 2022.

## ລັດຖະມົນຕີ ຕົກລົງ:
## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດລະບຽບການ, ເງື່ອນໄຂ, ຂັ້ນຕອນ ແລະ ມາດຕະການກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາການດຳເນີນທຸລະກິດກ່ຽວກັບທີ່ດິນ ໃຫ້ເປັນເອກະພາບ ໃນຂອບເຂດທົ່ວປະເທດ ເພື່ອຮັບປະກັນການເຄື່ອນໄຫວທຸລະກິດດັ່ງກ່າວໃຫ້ດຳເນີນໄປຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ແນໃສ່ເອື້ອອຳນວຍໃຫ້ແກ່ການພັດທະນາຕະຫຼາດອະສັງຫາລິມະຊັບ ລວມທັງຕະຫຼາດທີ່ດິນ, ສົ່ງເສີມການພັດທະນາທີ່ດິນຢ່າງແຂງແຮງ ຕາມກົນໄກເສດຖະກິດຕະຫຼາດ ທີ່ມີການຄຸ້ມຄອງດັດສົມຕາມກົດໝາຍ ແລະ ຮັບປະກັນການເກັບລາຍຮັບຈາກທີ່ດິນໃຫ້ມີປະສິດທິຜົນ, ຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ທຸລະກິດກ່ຽວກັບທີ່ດິນ**

ທຸລະກິດກ່ຽວກັບທີ່ດິນ ແມ່ນ ການດຳເນີນທຸລະກິດກ່ຽວກັບທີ່ດິນ ເປັນຕົ້ນ ການບໍລິການສຳຫຼວດວັດແທກ, ການບໍລິການປະເມີນລາຄາທີ່ດິນ, ການຊື້ ຂາຍສິດນຳໃຊ້ທີ່ດິນ, ການບໍລິການຊື້ ຂາຍສິດນຳໃຊ້ທີ່ດິນ ແລະ ການບໍລິການອື່ນ ກ່ຽວກັບທີ່ດິນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທີ່ດິນ ເພື່ອຫາຜົນກຳໄລ ແລະ ຜົນ

ປະໂຫຍດລວມຂອງສັງຄົມ ຈາກການດຳເນີນທຸລະກິດດັ່ງກ່າວ ຕາມກົນໄກເສດຖະກິດຕະຫຼາດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ໃບທະບຽນວິສາຫະກິດ** ໝາຍເຖິງ ເອກະສານຮັບຮອງການສ້າງຕັ້ງວິສາຫະກິດ ຢ່າງຖືກຕ້ອງຕາມກົດໝາຍ;

2. **ໃບອະນຸຍາດດຳເນີນທຸລະກິດ** ໝາຍເຖິງ ເອກະສານຢັ້ງຢືນ ໃນການອະນຸຍາດດຳເນີນທຸລະກິດ ໃນກິດຈະ ການໃດໜຶ່ງ ຢ່າງຖືກຕ້ອງຕາມກົດໝາຍ;

3. **ກົດລະບຽບຂອງວິສາຫະກິດ** ໝາຍເຖິງ ກົດລະບຽບຂອງວິສາຫະກິດຮຸ້ນສ່ວນ ແລະ ບໍລິສັດທີ່ສ້າງຂຶ້ນເອງ ເພື່ອກຳນົດນະໂຍບາຍ ແລະ ລະບຽບການພາຍໃນ ໃນການຄຸ້ມຄອງການເຄື່ອນໄຫວວິສາຫະກິດຂອງຕົນ. ກົດລະບຽບດັ່ງກ່າວ ຕ້ອງໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

4. **ຂາຮຸ້ນ** ໝາຍເຖິງ ຜູ້ປະກອບທຶນໃນວິສາຫະກິດຮຸ້ນສ່ວນ. ຂາຮຸ້ນຂອງວິສາຫະກິດຮຸ້ນສ່ວນອາດຈະເປັນ ບຸກຄົນ ຫຼື ນິຕິບຸກຄົນກໍໄດ້;

5. **ຜູ້ຖືຮຸ້ນ** ໝາຍເຖິງ ຜູ້ປະກອບທຶນໃນບໍລິສັດ. ຜູ້ຖືຮຸ້ນຮັບຜິດຊອບຕໍ່ໜີ້ສິນຂອງບໍລິສັດບໍ່ເກີນມູນຄ່າຮຸ້ນທີ່ຕົນຍັງບໍ່ທັນໄດ້ຖອກເຕັມເທົ່ານັ້ນ. ຜູ້ຖືຮຸ້ນຂອງບໍລິສັດອາດຈະມີໜຶ່ງຄົນ ຫຼື ຫຼາຍກວ່ານັ້ນ. ຜູ້ຖືຮຸ້ນ ຫຼື ຜູ້ສ້າງຕັ້ງບໍລິສັດອາດຈະເປັນບຸກຄົນ ຫຼື ນິຕິບຸກຄົນກໍໄດ້;

6. **ການຟອກເງິນ** ໝາຍເຖິງ ການປ່ຽນຮູບ, ນຳໃຊ້, ເຄື່ອນຍ້າຍ, ແລກປ່ຽນ, ໄດ້ມາ, ຄອບຄອງ, ໂອນກຳມະສິດທີ່ແທ້ຈິງ ຂອງເງິນ ຫຼື ຊັບສິນອື່ນ ທີ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໂດຍທີ່ຮູ້, ໄດ້ຮູ້ ຫຼື ສົງໄສວ່າ ເງິນ ຫຼື ຊັບສິນນັ້ນ ມາຈາກການກະທຳຜິດຕົ້ນ ເພື່ອປົກປິດ ຫຼື ຊຸກເຊື່ອງ ຄຸນລັກສະນະ, ທີ່ມາຂອງເງິນ, ທີ່ຕັ້ງຂອງຊັບສິນ ເພື່ອເຮັດໃຫ້ເງິນ ຫຼື ຊັບສິນດັ່ງກ່າວ ຖືກຕ້ອງຕາມກົດໝາຍ;

7. **ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ** ໝາຍເຖິງ ການເຄື່ອນໄຫວໂດຍເຈດຕະນາ ທັງທາງກົງ ແລະ ທາງອ້ອມ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ພະຍາຍາມໃຫ້, ຮັບໂຮມ, ຈັດຫາທຶນ ທີ່ຖືກຕ້ອງ ຫຼື ບໍ່ຖືກຕ້ອງ, ທັງໝົດ ຫຼື ບາງສ່ວນ ເພື່ອສະໜອງໃຫ້ແກ່ການກໍ່ການຮ້າຍ ຫຼື ຜູ້ກໍ່ການຮ້າຍ ຫຼື ການກະທຳທີ່ພົວພັນກັບການກໍ່ການຮ້າຍໂດຍສະເພາະ ເຖິງວ່າທຶນນັ້ນ ຈະຖືກນຳໃຊ້ ຫຼື ບໍ່ນຳໃຊ້ ເຂົ້າໃນການກະທຳຕົວຈິງກໍຕາມ;

8. **ການຕ້ານ ສະກັດກັ້ນ ການຟອກເງິນ** ໝາຍເຖິງ ການເຄື່ອນໄຫວ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີໜ້າທີ່ໂດຍກົງໃນການຊອກຮູ້, ຕ້ານ, ສະກັດກັ້ນ, ຈຳກັດ ແລະ ກຳຈັດ ການຟອກເງິນ ຊຶ່ງເປັນການກະທຳຜິດ ທີ່ເປັນອັນຕະລາຍຕໍ່ ຄວາມໝັ້ນຄົງຂອງຊາດ, ສ້າງຄວາມເສັຍຫາຍ ຕໍ່ພື້ນຖານເສດຖະກິດ-ສັງຄົມແຫ່ງຊາດ;

9. **ການຕ້ານ ສະກັດກັ້ນ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ** ໝາຍເຖິງ ການເຄື່ອນໄຫວ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີໜ້າທີ່ໂດຍກົງໃນການຊອກຮູ້, ຕ້ານ ສະກັດກັ້ນ, ຈຳກັດ ແລະ ກຳຈັດ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 ຂອງກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຊຶ່ງເປັນການກະທຳຜິດ ທີ່ເປັນອັນຕະລາຍຕໍ່ລະບົບເສດຖະກິດ ແລະ ແຕະຕ້ອງເຖິງລະບອບການເມືອງຂອງຊາດ;

10. **ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ** ໝາຍເຖິງ ບຸກຄົນຜູ້ເປັນເຈົ້າຂອງຜົນປະໂຫຍດສຸດທ້າຍທີ່ແທ້ຈິງ ຈາກການເຄື່ອນໄຫວທຸລະກິດ, ກິດຈະກຳ ຫຼື ທຸລະກຳ ໃດໜຶ່ງ ລວມທັງຜູ້ທີ່ມີອຳນາດ ໃນການຄວບຄຸມນິຕິບຸກຄົນ;

11. **ອາດຊະຍາກຳ** ໝາຍເຖິງ ການກະທຳຜິດທາງອາຍາ ກ່ຽວກັບການກະທຳຜິດຕົ້ນ ເປັນຕົ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

12. **ອາດຊະຍາກອນ** ໝາຍເຖິງ ຜູ້ທີ່ກໍ່ອາຊະຍາກຳ, ໂຈນ, ຜູ້ກະທຳຄວາມຜິດທາງອາຍາ ກ່ຽວກັບການກະທຳຜິດຕົ້ນ ເປັນຕົ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

13. **ການກະທຳຜິດຕົ້ນ** ໝາຍເຖິງ ການກະທຳຜິດທາງອາຍາທັງໝົດ ຊຶ່ງເປັນຕົ້ນເຫດການຟອກເງິນ ລວມທັງການກະທຳຜິດນອກດິນແດນ ສປປ ລາວ ທີ່ກໍ່ໃຫ້ເກີດມີຜົນຈາກການກະທຳຜິດຕົ້ນມີຄື ການສໍ້ໂກງຊັບ; ການປຸ້ນຊັບ ຫຼື ການລັກຊັບ; ການຄາດຕະກຳ ແລະ ການທຳຮ້າຍຮ່າງກາຍ; ການລັກພາຕົວ, ການກັກຂັງ ແລະ ການຈັບເປັນຕົວປະກັນ; ການຊື້ຂາຍຊັບທີ່ຜິດກົດໝາຍ; ການປອມແປງເງິນ ຫຼື ການໃຊ້ເງິນປອມ ລວມທັງການປອມແປງເຊັກ, ການໃຊ້ເຊັກ ຫຼື ພັນທະບັດປອມ; ການປອມແປງເອກະສານ ຫຼື ການໃຊ້ເອກະສານປອມ; ການລະເມີດຊັບສິນທາງປັນຍາ; ການສໍ້ລາດບັງຫຼວງ ລວມທັງການຮັບສິນບົນ ແລະ ການໃຫ້ສິນບົນ; ການຄ້າໂສເພນີຜູ້ໃຫຍ່ ແລະ ເດັກ; ການຄ້າມະນຸດ, ການຂົນຂວາຍສິ່ງຄົນອອກ ຫຼື ເອົາຄົນເຂົ້າປະເທດ; ການຜະລິດ ແລະ ຄ້າຂາຍຢາເສບຕິດ; ການຊື້ຂາຍອາ ວຸດເສິກ ຫຼື ວັດຖຸລະເບີດ; ການເຂົ້າຮ່ວມໃນກຸ່ມອົງການອາຊະຍາກຳ ແລະ ກຸ່ມຄົນທີ່ເກັບຄ່າຄຸ້ມຄອງ; ການກໍ່ການຮ້າຍ ລວມທັງການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ອາຊະຍາກຳທາງດ້ານສິ່ງແວດລ້ອມ; ອາຊະກຳທາງດ້ານອາກອນ; ການຊື້ຂາຍຂໍ້ມູນພາຍໃນ ແລະ ການປັ່ນຕະຫຼາດ; ການລະເມີດລະບຽບການກ່ຽວກັບລະບອບພາສີ, ອາກອນຂອງລັດ; ການບັງຄັບນາບຂູ່ເອົາຊັບ; ການເປັນໂຈນສະລັດ ແລະ ອື່ນໆ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ລວມທັງຄົນຕ່າງດ້າວ, ຄົນບໍ່ມີສັນຊາດຄົນຕ່າງປະເທດ, ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ ທີ່ດຳລົງຊີວິດ ແລະ ເຄື່ອນໄຫວຢູ່ໃນດິນແດນ ສປປ ລາວ.

## ໝວດທີ 2
## ການອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ

**ມາດຕາ 5 ການອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງໄດ້ຂຶ້ນທະບຽນວິສາຫະກິດ ນຳເຈົ້າໜ້າທີ່ທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍວິສາຫະກິດ ແລະ ຕ້ອງໄດ້ຮັບໃບອະນຸຍາດນຳຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງ ແວດລ້ອມ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 6 ເງື່ອນໄຂການອະນຸຍາດຂອງຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ**

ການຂໍອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ມີເງື່ອນໄຂ ດັ່ງນີ້:

1. ຜູ້ທີ່ຖືສັນຊາດລາວ ສາມາດດຳເນີນທຸລະກິດການຊື້ ຂາຍສິດນຳໃຊ້ທີ່ດິນ, ການບໍລິການສຳຫຼວດວັດແທກ, ການປະເມີນລາຄາທີ່ດິນ ແລະ ການບໍລິການອື່ນກ່ຽວກັບທີ່ດິນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ດິນ.

ສຳລັບຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ຄົນຕ່າງປະເທດທີ່ເປັນເຊື້ອຊາດລາວ ທີ່ໄດ້ຮັບ

ອະນຸຍາດດຳເນີນທຸລະກິດຢ່າງຖືກຕ້ອງຕາມກົດໝາຍ ສາມາດດຳເນີນທຸລະກິດກ່ຽວກັບການບໍລິການສຳຫຼວດ ວັດແທກ, ການປະເມີນລາຄາທີ່ດິນເທົ່ານັ້ນ;

2. ມີນັກວິຊາການທີ່ມີຄວາມຮູ້ ແລະ ປະສົບການດ້ານວຽກງານທີ່ດິນ ແຕ່ ສາມປີຂຶ້ນໄປ ໂດຍມີການຢັ້ງຢືນການປະຕິບັດວຽກງານຕົວຈິງ ຫຼື ຜູ້ມີໃບປະກາດສະນີຍະບັດລະດັບ ວິຊາສະເພາະທີ່ກ່ຽວຂ້ອງກັບວຽກງານທີ່ດິນ ຊັ້ນສູງຂຶ້ນໄປ ຈຳນວນ ສາມຄົນ ຂຶ້ນໄປ;

3. ເປີດບັນຊີເງິນຝາກນຳທະນາຄານທຸລະກິດ ຫຼື ທະນາຄານຂອງລັດ ທີ່ມີສຳນັກງານຕັ້ງຢູ່ ສປປ ລາວ;

4. ຖ້າຫາກແມ່ນທຸລະກິດກ່ຽວກັບການສຳຫຼວດວັດແທກ ຕ້ອງມີອຸປະກອນການສຳຫຼວດວັດແທກ ທີ່ໄດ້ມາດຕະຖານ;

5. ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງບໍ່ເຄີຍກະທຳຜິດທາງອາຍາທີ່ເປັນການກະທຳຜິດຄົ້ນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 13 ມາດຕາ 3 ຂອງຂໍ້ຕົກລົງສະບັບນີ້;

6. ມີທີ່ຕັ້ງສຳນັກງານທີ່ເໝາະສົມ ແລະ ມີວັດຖຸອຸປະກອນຮອງຮັບໃຫ້ແກ່ການດຳເນີນທຸລະກິດກ່ຽວກັບທີ່ດິນ.

**ມາດຕາ 7 ເອກະສານປະກອບຂໍອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ;
2. ຊີວະປະຫວັດຂອງຜູ້ສະເໜີຂໍອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ;
3. ບົດວິພາກເສດຖະກິດ-ເຕັກນິກໃນການຂໍອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ;
4. ລາຍງານຂໍ້ມູນ ປະຫວັດອາຊະຍາກຳ ຫຼື ການກ່ຽວພັນກັບ ອາຊະຍາກອນ ຂອງເຈົ້າຂອງວິສາຫະກິດ, ຂາຮຸ້ນ, ຜູ້ຖືຮຸ້ນ ແລະ ຜູ້ບໍລິຫານ;
5. ໃບແຈ້ງຊັບສິນ-ໜີ້ສິນ ຂອງເຈົ້າຂອງວິສາຫະກິດ, ຂາຮຸ້ນ, ຜູ້ຖືຮຸ້ນ ແລະ ຜູ້ບໍລິຫານ;
6. ສຳເນົາໃບທະບຽນວິສາຫະກິດ;
7. ປຶ້ມບັນຊີເງິນຝາກ ທີ່ລະບຸການເຄື່ອນໄຫວ ໜຶ່ງ ປີ ຜ່ານມາ;
8. ໃບແຈ້ງໂທດ;
9. ກົດລະບຽບຂອງວິສາຫະກິດຮຸ້ນສ່ວນ ຫຼື ບໍລິສັດ.

ມອບໃຫ້ກົມທີ່ດິນ ສ້າງແບບພິມປະກອບໃນຊຸດຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຫາ ຂໍ້ 5 ຂອງມາດຕານີ້.

**ມາດຕາ 8 ຂັ້ນຕອນການຂໍອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ**

ການຂໍອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ປະກອບມີຂັ້ນຕອນ ດັ່ງນີ້:

1. ການຍື່ນຄຳຮ້ອງ ຂໍອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ;
2. ການກວດກາເອກະສານ;
3. ການກວດສອບຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ແລະ ກວດກາວຽກງານການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ກ່ອນການອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ;
4. ການກວດກາສະຖານທີ່ຕັ້ງຂອງວິສາຫະກິດ;
5. ການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ.

**ມາດຕາ 9 ການຮັບຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ**

ການຮັບຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ໃຫ້ປະຕິບັດ ດັ່ງນີ້:

1. ກົມທີ່ດິນ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຮັບຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ຖ້າຫາກວ່າວິສາຫະກິດດັ່ງກ່າວໄດ້ຂຶ້ນທະບຽນວິສາຫະກິດຈາກກະຊວງອຸດສາຫະກຳ ແລະ ການຄ້າ;

2. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ຮັບຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ຖ້າຫາກວ່າວິສາຫະກິດດັ່ງກ່າວໄດ້ຂຶ້ນທະບຽນວິສາຫະກິດຈາກພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ.

**ມາດຕາ 10 ການກວດກາເອກະສານ**

ກົມທີ່ດິນ ຫຼື ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ພາຍຫຼັງທີ່ໄດ້ຮັບຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ແລ້ວດຳເນີນການກວດກາເອກະສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ພາຍໃນ ຫ້າວັນ ລັດຖະການ ນັບແຕ່ມື້ຮັບຄຳຮ້ອງເປັນຕົ້ນໄປ. ໃນເວລາພິຈາລະນາ ຫາກເຫັນວ່າມີຄວາມຈຳເປັນ ສາມາດຮຽກເອົາເອກະສານ ຫຼື ຂໍ້ມູນເພີ່ມເຕີມຈາກຜູ້ທີ່ມີຈຸດປະສົງຂໍອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ຫຼື ເຊີນຜູ້ທີ່ກ່ຽວຂ້ອງເຂົ້າມາຊີ້ແຈງ ຫຼື ໃຫ້ຂໍ້ມູນ.

ໃນກໍລະນີເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ຕ້ອງແຈ້ງຕອບເປັນລາຍລັກອັກສອນໃຫ້ຜູ້ທີ່ມາຂໍອະນຸຍາດຊາບ ພາຍໃນ ສາມວັນ ລັດຖະການ ນັບແຕ່ມື້ສຳເລັດການກວດກາເອກະສານເປັນຕົ້ນໄປ.

**ມາດຕາ 11 ການກວດສອບຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ກ່ອນການອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ**

ກົມທີ່ດິນ ຫຼື ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ດຳເນີນການກວດສອບຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ກ່ອນການອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ແມ່ນ ໃຫ້ປະຕິບັດຕາມຄູ່ມືແນະນຳກ່ຽວກັບການກວດສອບຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ກ່ອນ ແລະ ຫຼັງ ການອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ.

**ມາດຕາ 12 ການກວດກາສະຖານທີ່ຕັ້ງຂອງວິສາຫະກິດ**

ກົມທີ່ດິນ ຫຼື ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ດຳເນີນການກວດກາສະຖານທີ່ຕັ້ງຂອງວິສາຫະກິດ ຫຼື ທີ່ຕັ້ງໂຄງການຂອງວິສາຫະກິດ ເພື່ອເກັບກຳຂໍ້ມູນລະອຽດຕາມບົດວິພາກເສດຖະກິດ-ເຕັກນິກ ຂອງວິສາຫະກິດ ທີ່ສະເໜີຂໍອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ. ການລົງກວດກາ ແຕ່ລະຄັ້ງ ຕ້ອງແຈ້ງເປັນລາຍລັກອັກສອນ ໃຫ້ວິສາຫະກິດຊາບ ລ່ວງໜ້າຢ່າງໜ້ອຍ ສາມວັນ ລັດຖະການ ເພື່ອກະກຽມ ແລະ ໃຫ້ການຮ່ວມມື. ການກວດສະຖານທີ່ຕັ້ງຂອງວິສາຫະກິດ ຕ້ອງໃຫ້ສຳເລັດພາຍໃນ ສິບວັນ ລັດຖະການ ນັບແຕ່ມື້ລົງກວດກາຕົວຈິງ.

ສຳລັບ ການກວດກາສະຖານທີ່ຕັ້ງຂອງວິສາຫະກິດ ຫຼື ທີ່ຕັ້ງໂຄງການຂອງວິສາຫະກິດ ຕ້ອງໄດ້ເຮັດບົດບັນທຶກຮ່ວມ ລະຫວ່າງ ພະນັກງານກວດກາສະຖານທີ່ຕັ້ງຂອງວິສາຫະກິດ ຫຼື ທີ່ຕັ້ງໂຄງການຂອງວິສາຫະກິດ ແລະ ເຈົ້າຂອງວິສາຫະກິດ ຫຼື ຂາຮຸ້ນ ຫຼື ຜູ້ຖືຮຸ້ນ ຫຼື ຜູ້ບໍລິຫານ ພ້ອມທັງຖ່າຍຮູບສະຖານທີ່, ອຸປະກອນຕ່າງໆ ແລະ ການ

ມີຕົວຕົນຂອງຊ່ຽວຊານ ຕາມທີ່ລະບຸໃນບົດວິພາກເສດຖະກິດເຕັກນິກ ແລະ ຕ້ອງໃຫ້ສຳເລັດພາຍໃນ ສິບວັນ ລັດຖະການ ນັບແຕ່ມື້ລົງກວດກາຕົວຈິງ.

### ມາດຕາ 13 ການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ

ການພິຈາລະນາ ອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນໃຫ້ປະຕິບັດ ດັ່ງນີ້:

1. ຂັ້ນສູນກາງ: ວິສາຫະກິດ ທີ່ໄດ້ຮັບການຂຶ້ນທະບຽນວິສາຫະກິດ ຈາກກະຊວງອຸດສາຫະກຳ ແລະ ການຄ້າ ແມ່ນ ມອບໃຫ້ກົມທີ່ດິນ ເປັນຜູ້ພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ພາຍໃນກຳນົດເວລາ ສາມວັນ ລັດຖະການ ນັບແຕ່ລັດຖະມົນ ຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ອອກຂໍ້ຕົກລົງວ່າດ້ວຍການອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ເປັນຕົ້ນໄປ;
2. ຂັ້ນທ້ອງຖິ່ນ: ວິສາຫະກິດ ທີ່ໄດ້ຮັບການຂຶ້ນທະບຽນວິສາຫະກິດ ຈາກພະແນກອຸດສາຫະກຳ ແລະ ການຄ້າ ເປັນຜູ້ຂຶ້ນທະບຽນວິສາຫະກິດ ແມ່ນ ມອບໃຫ້ພະແນກຊັບ ພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເປັນຜູ້ພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ພາຍໃນກຳນົດເວລາ ສາມວັນ ລັດຖະການ ນັບແຕ່ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ອອກຂໍ້ຕົກລົງວ່າດ້ວຍການອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ເປັນຕົ້ນໄປ.

ໃນກໍລະນີທີ່ບໍ່ເຫັນດີ ຕ້ອງແຈ້ງຕອບເປັນລາຍລັກອັກສອນໃຫ້ແກ່ວິສາຫະກິດຊາບ ພາຍໃນກຳນົດເວລາ ຫ້າວັນ ລັດຖະການ.

## ໝວດທີ 3
## ປະເພດ ແລະ ການຂຶ້ນບັນຊີ ທຸລະກິດກ່ຽວກັບທີ່ດິນ

### ມາດຕາ 14 ປະເພດທຸລະກິດກ່ຽວກັບທີ່ດິນ

ທຸລະກິດກ່ຽວກັບທີ່ດິນ ປະກອບມີປະເພດ ດັ່ງນີ້:

1. ການບໍລິການສຳຫຼວດວັດແທກ;
2. ການບໍລິການປະເມີນລາຄາທີ່ດິນ;
3. ການຊື້ ຂາຍສິດນຳໃຊ້ທີ່ດິນ;
4. ການບໍລິການຊື້ ຂາຍສິດນຳໃຊ້ທີ່ດິນ ແລະ ການບໍລິການອື່ນກ່ຽວກັບທີ່ດິນ.

### ມາດຕາ 15 ການບໍລິການສຳຫຼວດວັດແທກທີ່ດິນ

ການບໍລິການການສຳຫຼວດວັດແທກທີ່ດິນ ແມ່ນ ການບໍລິການກ່ຽວກັບ ການສຳຫຼວດວັດແທກ ແລະ ສ້າງແຜນທີ່ຕາດິນ ພ້ອມທັງບັນທຶກບັນດາຂໍ້ມູນຕອນດິນ ຊຶ່ງປະກອບມີ ຕຳແໜ່ງທີ່ຕັ້ງຂອງຕອນດິນ, ຂອບເຂດ, ໄລຍະຮອບຕອນດິນ, ຂະໜາດ, ຮູບຮ່າງ, ເນື້ອທີ່ດິນ, ເສັ້ນທາງ, ແມ່ນ້ຳ ແລະ ອື່ນໆ ໂດຍສອດຄ່ອງກັບຄຳແນະນຳ ວ່າດ້ວຍການສຳຫຼວດວັດແທກ ແລະ ສ້າງແຜນທີ່ຕາດິນ ເພື່ອເປັນຂໍ້ມູນນຳສະເໜີຕໍ່ອົງການລັດທີ່ກ່ຽວຂ້ອງ ພິຈາລະນາຮັບຮອງ ພ້ອມທັງປະຕິບັດສິດ ແລະ ພັນທະ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 16 ການບໍລິການປະເມີນລາຄາທີ່ດິນ

ການບໍລິການປະເມີນລາຄາທີ່ດິນ ແມ່ນ ການບໍລິການກ່ຽວກັບການປະເມີນລາຄາທີ່ດິນ ເພື່ອຈຸດປະສົງການຂາຍ, ແລກປ່ຽນສິດນຳໃຊ້ທີ່ດິນ, ເອົາທີ່ດິນເຂົ້າເປັນຮຸ້ນ, ເປັນຫຼັກຊັບຄ້ຳປະກັນ ພ້ອມທັງປະຕິບັດສິດ ແລະ ພັນທະຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 17 ການຊື້ ຂາຍສິດນຳໃຊ້ທີ່ດິນ**

ການຊື້ ຂາຍສິດນຳໃຊ້ທີ່ດິນ ແມ່ນ ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ເປັນຜູ້ຊື້ ແລະ ຂາຍສິດນຳໃຊ້ທີ່ດິນ ດ້ວຍທຶນຂອງຕົນເອງ ເປັນຕົ້ນ ການຊື້ ຂາຍສິດນຳໃຊ້ທີ່ດິນ ເພື່ອຂາຍເອົາກຳໄລ ຫຼື ຈັດສັນທີ່ດິນແບ່ງຂາຍເປັນຕອນ ຫຼື ປຸກສ້າງເຮືອນຈັດສັນຂາຍເປັນແຕ່ລະຕອນ ແລະ ການພັດທະນາເປັນຕົວເມືອງໃໝ່ ແລ້ວຈັດສັນຂາຍເປັນຕອນ, ສ້າງເປັນຄອນໂດມີນຽມ, ອາພາດເມັນ ແລະ ການຊື້ ຂາຍ ສິດນຳໃຊ້ທີ່ດິນຂອງລັດແບບມີກຳນົດ ທີ່ພົວພັນກັບສິດນຳໃຊ້ທີ່ດິນ ພ້ອມທັງປະຕິບັດສິດ ແລະ ພັນທະຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 18 ການບໍລິການຊື້ ຂາຍສິດນຳໃຊ້ທີ່ດິນ ແລະ ການບໍລິການອື່ນກ່ຽວກັບທີ່ດິນ**

ການບໍລິການຊື້ ຂາຍສິດນຳໃຊ້ທີ່ດິນ ແລະ ການບໍລິການອື່ນກ່ຽວກັບທີ່ດິນ ແມ່ນ ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ເຮັດການບໍລິການ ໃຫ້ຄຳປຶກສາ ແລະ ເປັນນາຍໜ້າໃຫ້ບຸກຄົນອື່ນ ກ່ຽວກັບທີ່ດິນ ເປັນຕົ້ນ ການຊື້ ຂາຍ, ການມອບ ຫຼື ຍົກສິດນຳໃຊ້ທີ່ດິນ, ແລກປ່ຽນ ສິດນຳໃຊ້ທີ່ດິນ, ການເອົາສິດນຳໃຊ້ທີ່ດິນເຂົ້າເປັນຮຸ້ນ, ການເຊົ່າ ຫຼື ສຳປະທານທີ່ດິນ, ການສ້າງລະບົບຖານຂໍ້ມູນກ່ຽວກັບການຄຸ້ມຄອງ-ບໍລິຫານທີ່ດິນ ພ້ອມທັງປະຕິບັດສິດ ແລະ ພັນທະຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 19 ການຂຶ້ນບັນຊີທຸລະກິດກ່ຽວກັບທີ່ດິນ**

ການຂຶ້ນບັນຊີທຸລະກິດກ່ຽວກັບທີ່ດິນ ແມ່ນ ການບັນທຶກ, ເກັບກຳ ແລະ ສັງລວມຂໍ້ມູນ ການເຄື່ອນໄຫວ ແລະ ດຳເນີນທຸລະກິດກ່ຽວກັບທີ່ດິນ ປະເພດຕ່າງໆຕາມທີ່ໄດ້ກຳໄວ້ ໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້ ເພື່ອຮັບປະກັນການຄຸ້ມຄອງ, ຕິດຕາມ ກວດກາ ການເຄື່ອນໄຫວ ແລະ ການປ່ຽນແປງ ທຸລະກິດກ່ຽວກັບທີ່ດິນ.

ການຂຶ້ນບັນຊີທຸລະກິດກ່ຽວກັບທີ່ດິນ ໄດ້ແບ່ງຂອບເຂດຄວາມຮັບຜິດຊອບ ດັ່ງນີ້:

1. ກົມທີ່ດິນ ເປັນຜູ້ຂຶ້ນບັນຊີທຸລະກິດກ່ຽວກັບທີ່ດິນ ທີ່ຕົນເອງໄດ້ອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ແລ້ວສົ່ງໃຫ້ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ບ່ອນວິສາຫະກິດກ່ຽວກັບທີ່ດິນຕັ້ງຢູ່ ເພື່ອຄຸ້ມຄອງ ແລະ ຕິດຕາມ ກວດກາ ການເຄື່ອນໄຫວ ແລະ ປ່ຽນແປງກ່ຽວກັບການດຳເນີນທຸລະກິດດັ່ງກ່າວ ພ້ອມທັງລາຍງານໃຫ້ ລັດຖະມົນຕີກະຊວງຊັບພະຍາກອນທະມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງແຂວງ ຮັບຊາບ ເປັນແຕ່ລະໄລຍະ;

2. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເປັນຜູ້ຂຶ້ນບັນຊີທຸລະກິດກ່ຽວກັບທີ່ດິນ ທີ່ຕົນເອງໄດ້ອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ແລ້ວນຳສົ່ງໃຫ້ກົມທີ່ດິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຜູ້ສັງລວມຂຶ້ນບັນຊີລວມສູນໃນຂອບເຂດທົ່ວປະເທດ ພ້ອມທັງລາຍງານອົງການປົກຄອງ ຂັ້ນແຂວງ ຮັບຊາບ ເປັນແຕ່ລະໄລຍະ.

## ໝວດທີ 4
## ໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ

**ມາດຕາ 20 ໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ**

ໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ແມ່ນ ເອກະສານຢັ້ງຢືນ ໃນການດຳເນີນທຸລະກິດກ່ຽວກັບທີ່ດິນໃຫ້ແກ່ ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຂຶ້ນທະບຽນວິສາຫະກິດຕາມກົດໝາຍວ່າດ້ວຍວິສາຫະກິດ.

ໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ມີອາຍຸນຳໃຊ້ ສາມ ປີ ແລະ ສາມາດຕໍ່ໄດ້ຕາມການສະເໜີຂອງວິສາຫະກິດ, ມອບໃຫ້ກົມທີ່ດິນ ເປັນຜູ້ຄົ້ນຄວ້າຮູບແບບ ແລະ ເນື້ອໃນຂອງໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ.

**ມາດຕາ 21 ການຕໍ່ໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ**

ການຕໍ່ໃບອະນຸຍາດ ດຳເນີນທຸລະກິດກ່ຽວກັບທີ່ດິນ ແມ່ນ ການບັນທຶກ ແລະ ການຢັ້ງຢືນຄືນໃໝ່ໃນເວລາໝົດອາຍຸ ສາມ ປີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 20 ຂອງຂໍ້ຕົກລົງສະບັບນີ້.

ວິສາຫະກິດທີ່ມີຈຸດປະສົງ ຂໍຕໍ່ໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ໃຫ້ຍື່ນຄຳຮ້ອງຫາພາກສ່ວນທີ່ອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງຂໍ້ຕົກລົງສະບັບນີ້ ກ່ອນໃບອະນຸຍາດດັ່ງກ່າວຈະໝົດອາຍຸ ພາຍໃນກຳນົດເວລາ ເກົ້າສິບ ວັນ. ສຳລັບ ການຕໍ່ໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ແມ່ນໃຫ້ປະຕິບັດຕາມມາດຕາ 9, 10, 11, 12 ແລະ 13 ຂອງຂໍ້ຕົກລົງສະບັບນີ້ ແລະ ໃບຢັ້ງຢືນການມອບພັນທະອາກອນປະຈຳປີຂອງວິສາຫະກິດ ພ້ອມທັງເຮັດບົດລາຍງານການເຄື່ອນໄຫວຂອງວິສາຫະກິດດັ່ງກ່າວ ຕາມອາຍຸໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ;

ໃນກໍລະນີ ຫາກບໍ່ສະເໜີຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ວິສາຫະກິດຈະບໍ່ສາມາດດຳເນີນທຸລະກິດໃນກິດຈະການດັ່ງກ່າວຕໍ່ໄດ້ ແລະ ຈະຖືກໂຈະ ຫຼື ຖອນໃບອະນຸ ຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ແລະ 24 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 22 ການໂອນ ແລະ ປ່ຽນແປງໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ**

ວິສາຫະກິດ ທີ່ດຳເນີນທຸລະກິດກ່ຽວກັບທີ່ດິນ ທີ່ມີຈຸດປະສົງໂອນກິດຈະການຂອງຕົນ ໃຫ້ເຈົ້າຂອງຜູ້ໃໝ່ຕ້ອງສະເໜີຕໍ່ພາກສ່ວນທີ່ອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ເພື່ອປ່ຽນຊື່ເຈົ້າຂອງ ຫຼື ປ່ຽນຊື່ວິສາຫະກິດ ໃນໃບອະນຸຍາດດັ່ງກ່າວ. ເຈົ້າຂອງວິສາຫະກິດຜູ້ໃໝ່ ຕ້ອງສືບຕໍ່ປະຕິບັດສິດ ແລະ ພັນທະ ທີ່ກຳນົດໄວ້ໃນໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ, ກົດໝາຍ ແລະ ລະບຽບການ.

ວິສາຫະກິດ ທີ່ດຳເນີນທຸລະກິດກ່ຽວກັບທີ່ດິນ ທີ່ມີຈຸດປະສົງປ່ຽນແປງໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ເປັນຕົ້ນ ການຂະຫຍາຍ, ການເພີ່ມ ຫຼື ຫຼຸດປະເພດ ແລະ ຂະໜາດ ຂອງວິສາຫະກິດທີ່ມີຢູ່ແລ້ວ ຕ້ອງສະເໜີຕໍ່ພາກສ່ວນທີ່ອອກໃບອະນຸຍາດ ເພື່ອຂໍໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນຄືນໃໝ່.

**ມາດຕາ 23 ການໂຈະໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ**

ໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ຈະຖືກໂຈະຕາມແຕ່ກໍລະນີ ດັ່ງນີ້:

1. ລະເມີດ ກົດໝາຍ ແລະ ລະບຽບການ ກ່ຽວກັບການດຳເນີນທຸລະກິດກ່ຽວກັບທີ່ດິນ ທີ່ສົ່ງຜົນກະທົບຮ້າຍແຮງ ແຕ່ໃຫ້ໂອກາດປັບປຸງແກ້ໄຂ;

2. ບໍ່ຕໍ່ໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ພາຍຫຼັງທີ່ໄດ້ຮັບການແຈ້ງເຕືອນ ສອງຄັ້ງ ຈາກພາກສ່ວນອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ;

3. ນຳໃຊ້ເຄື່ອງມື, ວັດຖຸປະກອນ ຫຼື ເຕັກໂນໂລຊີ ທີ່ບໍ່ໄດ້ມາດຕະຖານ ໃນການດຳເນີນທຸລະກິດກ່ຽວທີ່ດິນ;

4. ບໍ່ປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນ ໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ;

5. ມີວິຊາການ ແລະ ຊ່ຽວຊານ ບໍ່ຄົບຕາມຈຳນວນ ແລະ ບໍ່ປະຕິບັດຕາມບົດວິພາກເສດຖະກິດ-ເຕັກນິກ;

6. ບໍ່ເສຍອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ຕາມກົດໝາຍ ແລະ ລະບຽບການ;

7. ປົດບັງ, ເຊື່ອງອຳ ແລະ ໃຫ້ຂໍ້ມູນກ່ຽວກັບການດຳເນີນກິດຈະການກ່ຽວກັບທີ່ດິນ ບໍ່ຖືກຕ້ອງຕາມຄວາມເປັນຈິງ;

8. ມະຕິກອງປະຊຸມຂອງຜູ້ຖືຮຸ້ນ ແລະ ບັນຫາອື່ນໆ ທີ່ວິສາຫະກິດສະເໜີໃຫ້ໂຈະການເຄື່ອນໄຫວທຸລະກິດກ່ຽວກັບທີ່ດິນ;

9. ຖືກຖອນໃບທະບຽນວິສາຫະກິດຈາກຂະແໜງການອຸດສາຫະກຳ ແລະ ການຄ້າ.

ຖ້າຫາກພົບເຫັນກໍລະນີໃດໜຶ່ງ ທີ່ກ່າວມາຂ້າງເທິງນີ້ ຈະຖືກໂຈະໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ໂດຍມີກຳນົດເວລາອັນແນ່ນອນ ຕາມແຕ່ກໍລະນີ ເພື່ອໃຫ້ວິສາຫະກິດດັ່ງກ່າວ ປັບປຸງແກ້ໄຂ ຂໍ້ບົກຜ່ອງທີ່ເກີດຈາກການດຳເນີນທຸລະກິດຂອງຕົນ.

ໃນກໍລະນີແຈ້ງໂຈະ ຕ້ອງນຳສົ່ງໜັງສືແຈ້ງໂຈະດັ່ງກ່າວ ໃຫ້ຂະແໜງການເງິນ, ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງຊາບ.

**ມາດຕາ 24 ການຖອນໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ**

ໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ຈະຖືກຖອນຕາມແຕ່ກໍລະນີ ດັ່ງນີ້:

1. ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບການດຳເນີນທຸລະກິດກ່ຽວກັບທີ່ດິນ ທີ່ສົ່ງຜົນກະທົບຢ່າງຮ້າຍແຮງ ແລະ ບໍ່ສາມາດແກ້ໄຂໄດ້;

2. ບໍ່ປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ ໃນໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ຊຶ່ງກໍ່ຄວາມເສຍຫາຍຢ່າງຮ້າຍແຮງ ແລະ ບໍ່ສາມາດແກ້ໄຂໄດ້;

3. ບໍ່ຕໍ່ໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ພາຍຫຼັງທີ່ໄດ້ຮັບການແຈ້ງເຕືອນ ສາມຄັ້ງ ຈາກພາກສ່ວນ ອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ;

4. ບໍ່ດຳເນີນການແກ້ໄຂບັນຫາໃດໜຶ່ງພາຍຫຼັງທີ່ຖືກໂຈະ ແລະ ໄດ້ຮັບແຈ້ງເຕືອນ ຈາກພາກສ່ວນທີ່ອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ.

ໃນກໍລະນີແຈ້ງຖອນ ຕ້ອງນຳສົ່ງໜັງສືແຈ້ງຖອນດັ່ງກ່າວ ໃຫ້ຂະແໜງການເງິນ, ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງຊາບ.

## ໝວດທີ 5
## ການກວດສອບຜູ້ຮັບຜົນປະໂຫຍດທີ່ແທ້ຈິງ
## ກ່ອນ ແລະ ຫຼັງ ການອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ

**ມາດຕາ 25 ການກວດສອບຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ກ່ອນ ແລະ ຫຼັງ ການອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ**

ການກວດສອບຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ກ່ອນ ແລະ ຫຼັງ ການອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ແມ່ນການກວດສອບປະຫວັດເຈົ້າຂອງວິສາຫະກິດ, ຂາຮຸ້ນ, ຜູ້ຖືຮຸ້ນ ແລະ ຜູ້ບໍລິຫານ ລວມທັງກວດສອບແຫຼ່ງທຶນທີ່ຈະນຳມາດຳເນີນທຸລະກິດກ່ຽວກັບທີ່ດິນ ເພື່ອຮັບປະກັນ ການຕ້ານ ສະກັດກັ້ນ ແລະ ຈຳກັດ ກ່ຽວກັບການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

ການກວດສອບຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ກ່ອນ ແລະ ຫຼັງ ການອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຈຸດປະສົງ ຂອງການກວດສອບ ຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ກ່ອນ ແລະ ຫຼັງ ການອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ;

2. ຂັ້ນຕອນການກວດສອບປະຫວັດຂອງເຈົ້າຂອງວິສາຫະກິດ, ຂາຮຸ້ນ, ຜູ້ຖືຮຸ້ນ ແລະ ຜູ້ບໍລິຫານ ທຸລະກິດກ່ຽວກັບທີ່ດິນ;

3. ການກວດສອບແຫຼ່ງທຶນທີ່ຈະນຳມາດຳເນີນທຸລະກິດກ່ຽວກັບທີ່ດິນ;

4. ການປ່ຽນແປງເຈົ້າຂອງວິສາຫະກິດ, ຂາຮຸ້ນ, ຜູ້ຖືຮຸ້ນ ແລະ ຜູ້ບໍລິຫານ;

5. ການເກັບຮັກສາຂໍ້ມູນ;

6. ມາດຕະການຕໍ່ຜູ້ລະເມີດ;

7. ການຈັດຕັ້ງປະຕິບັດ;

8. ຜົນສັກສິດ.

ມອບໃຫ້ກົມທີ່ດິນ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າສ້າງຄູ່ມືແນະນຳກ່ຽວກັບການກວດສອບຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ກ່ອນ ແລະ ຫຼັງ ການອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ.

**ມາດຕາ 26 ການກວດສອບຊີວະປະຫວັດ ແລະ ປະຫວັດອາຊະຍາກຳ ເຈົ້າຂອງວິສາຫະກິດ, ຂາຮຸ້ນ, ຜູ້ຖືຮຸ້ນ ແລະ ຜູ້ບໍລິຫານ ທຸລະກິດກ່ຽວກັບທີ່ດິນ**

ການກວດສອບຊີວະປະຫວັດເຈົ້າຂອງວິສາຫະກິດ, ຂາຮຸ້ນ, ຜູ້ຖືຮຸ້ນ ແລະ ຜູ້ບໍລິຫານ ທຸລະກິດກ່ຽວກັບທີ່ດິນແມ່ນ ການກວດສອບກ່ຽວກັບຂໍ້ມູນສ່ວນຕົວ, ປະຫວັດການສຶກສາ ແລະ ການຝຶກອົບຮົມ, ປະຫວັດການເຮັດວຽກ, ຍາດສາຍຕັ້ງ ຫຼື ສາຍຂວາງ ແລະ ການຖືຮຸ້ນ ໃນທຸລະກິດອື່ນທີ່ມີຢູ່ໃນປະຈຸບັນ.

ກວດສອບປະຫວັດອາຊະຍາກຳເຈົ້າຂອງວິສາຫະກິດ, ຂາຮຸ້ນ, ຜູ້ຖືຮຸ້ນ ແລະ ຜູ້ບໍລິຫານ ທຸລະກິດກ່ຽວກັບທີ່ດິນ ແມ່ນ ການກວດສອບກ່ຽວກັບຂໍ້ມູນ ສ່ວນຕົວ, ປະຫວັດອາຊະຍາກຳ, ການກ່ຽວພັນກັບ ອາຊະຍາກອນທັງພາຍໃນ ແລະ ຕ່າງປະເທດ, ບັນດາຂໍ້ມູນດ້ານລົບທີ່ ອົງການໃດໜຶ່ງທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຄົ້ນພົບ.

**ມາດຕາ 27 ການກວດສອບແຫຼ່ງທຶນ ທີ່ຈະນຳມາສ້າງຕັ້ງທຸລະກິດກ່ຽວທີ່ດິນ**

ທຶນທີ່ຈະນຳມາສ້າງຕັ້ງທຸລະກິດກ່ຽວກັບທີ່ດິນ ຕ້ອງໄດ້ກວດສອບແຫຼ່ງທຶນ ທີ່ເປັນເງິນ ຫຼື ຊັບສິນທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ, ສັງຫາລິມະຊັບ, ອະສັງຫາລິມະຊັບ ແລະ ທຸກເອກະສານ ຫຼື ເຄື່ອງມືທາງດ້ານການເງິນທຸກຮູບແບບ ທັງໃນຮູບແບບເອເລັກໂຕຣນິກ ຫຼື ດິຈິຕອນ, ໃບຢັ້ງຢືນກ່ຽວກັບສິດນຳໃຊ້ທີ່ດິນ, ກຳມະສິດ ຫຼື ຜົນປະໂຫຍດຈາກທຶນນັ້ນ ຂອງເຈົ້າຂອງວິສາຫະກິດ, ຂາຮຸ້ນ, ຜູ້ຖືຮຸ້ນ ແລະ ຜູ້ບໍລິຫານ ນຳສະຖາບັນການເງິນ ທັງພາຍໃນ ແລະ ຕ່າງປະເທດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

**ມາດຕາ 28 ການປ່ຽນແປງເຈົ້າຂອງວິສາຫະກິດ, ຂາຮຸ້ນ, ຜູ້ຖືຮຸ້ນ ແລະ ຜູ້ບໍລິຫານ ທຸລະກິດກ່ຽວກັບທີ່ດິນ**

ການປ່ຽນແປງເຈົ້າຂອງວິສາຫະກິດ, ຂາຮຸ້ນ, ຜູ້ຖືຮຸ້ນ ແລະ ຜູ້ບໍລິຫານ ທຸລະກິດກ່ຽວກັບທີ່ດິນ ຕ້ອງໄດ້ຜ່ານຂັ້ນຕອນການກວດສອບ ຊີວະປະຫວັດ, ສະຖານະການມີຕົວຕົນ ແລະ ປະຫວັດອາຊະຍາກຳ ຕາມທີ່ໄດ້ກຳນົດ

ໄວ້ໃນ ຄູ່ມືແນະນຳກ່ຽວກັບການກວດສອບຜູ້ຮັບຜົນປະໂຫຍດທີ່ແທ້ຈິງ ກ່ອນ ແລະ ຫຼັງ ການອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ.

**ມາດຕາ 29 ການເກັບຮັກສາຂໍ້ມູນ ຂອງເຈົ້າຂອງວິສາຫະກິດ, ຂາຮຸ້ນ, ຜູ້ຖືຮຸ້ນ ແລະ ຜູ້ບໍລິຫານ ທຸລະກິດກ່ຽວກັບທີ່ດິນ**

ເອກະສານທີ່ຕິດພັນກັບເຈົ້າຂອງວິສາຫະກິດ, ຂາຮຸ້ນ, ຜູ້ຖືຮຸ້ນ ແລະ ຜູ້ບໍລິຫານທຸລະກິດກ່ຽວກັບທີ່ດິນ ແມ່ນໃຫ້ເກັບຮັກສາໄວ້ໂດຍບໍ່ມີກຳນົດ ຊຶ່ງການເກັບມ້ຽນ ໃຫ້ເກັບເປັນ ເອກະສານ (Hard Copy) ແລະ ສຳເນົາເປັນເອເລັກໂຕຼນິກ (Soft Copy).

## ໝວດທີ 6
## ການກວດກາວຽກງານການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສຳລັບທຸລະກິດກ່ຽວກັບທີ່ດິນ

**ມາດຕາ 30 ການກວດກາວຽກງານການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສຳລັບທຸລະກິດກ່ຽວກັບທີ່ດິນ**

ການກວດກາວຽກງານ ການຕ້ານ ສະກັດກັ້ນ ການຟອກເງິນ ສຳລັບທຸລະກິດກ່ຽວກັບທີ່ດິນ ແມ່ນ ການດຳເນີນການຕິດຕາມ ກວດກາທັບທີ່ ໃນການຈັດຕັ້ງປະຕິບັດວຽກງານ ທີ່ຕິດພັນກັບການບໍລິການປະເມີນລາຄາທີ່ດິນ, ການຊື້ ຂາຍສິດນຳໃຊ້ທີ່ດິນ ແລະ ການບໍລິການຊື້ ຂາຍສິດນຳໃຊ້ທີ່ດິນ ແລະ ການບໍລິການອື່ນກ່ຽວກັບທີ່ດິນ ເພື່ອຊອກຮູ້, ຕ້ານ ສະກັດກັ້ນ, ຈຳກັດ ແລະ ກຳຈັດ ການຟອກເງິນ ເປັນຕົ້ນ ການປ່ຽນຮູບ, ນຳໃຊ້, ເຄື່ອນຍ້າຍ, ແລກ ປ່ຽນ , ໄດ້ມາ, ຄອບຄອງ, ໂອນກຳມະສິດທີ່ແທ້ຈິງ ຂອງເງິນ ຫຼື ຊັບສິນອື່ນ ທີ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໂດຍທີ່ຮູ້, ໄດ້ຮູ້ ຫຼື ສົງໄສວ່າ ເງິນ ຫຼືຊັບສິນນັ້ນ ມາຈາກການກະທຳຜິດຕົ້ນ ເພື່ອປົກປິດ ຫຼື ຊຸກເຊື່ອງ ຄຸນລັກສະນະ, ທີ່ມາຂອງເງິນ, ທີ່ຕັ້ງຂອງຊັບສິນ ເພື່ອເຮັດໃຫ້ເງິນ ຫຼື ຊັບສິນດັ່ງກ່າວ ຖືກຕ້ອງຕາມກົດໝາຍ.

ການກວດກາວຽກງານ ການຕ້ານ ສະກັດກັ້ນ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສຳລັບທຸລະກິດກ່ຽວກັບທີ່ດິນ ທີ່ໃຫ້ການບໍລິການປະເມີນລາຄາທີ່ດິນ, ການຊື້ ຂາຍສິດນຳໃຊ້ທີ່ດິນ ແລະ ການບໍລິການຊື້ ຂາຍສິດນຳໃຊ້ທີ່ດິນ ແລະ ການບໍລິການອື່ນກ່ຽວກັບທີ່ດິນ ແມ່ນ ການດຳເນີນການຕິດຕາມກວດກາທັບທີ່ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ເພື່ອຊອກຮູ້, ຕ້ານ, ສະກັດກັ້ນ, ຈຳກັດ ແລະ ກຳຈັດ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເປັນຕົ້ນ ການເຄື່ອນໄຫວໂດຍເຈດຕະນາ ທັງທາງກົງ ແລະ ທາງອ້ອມ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ພະຍາຍາມໃຫ້, ຮັບໂຮມ, ຈັດຫາທຶນ ທີ່ຖືກຕ້ອງ ຫຼື ບໍ່ຖືກຕ້ອງ ທັງໝົດ ຫຼື ບາງສ່ວນ ເພື່ອສະໜອງໃຫ້ແກ່ການກໍ່ການຮ້າຍ ຫຼື ຜູ້ກໍ່ການຮ້າຍ ຫຼື ການກະທຳທີ່ພົວພັນກັບການກໍ່ການຮ້າຍໂດຍສະເພາະ ເຖິງວ່າທຶນນັ້ນ ຈະຖືກນຳໃຊ້ ຫຼື ບໍ່ນຳໃຊ້ ເຂົ້າໃນການກະທຳຕົວຈິງກໍຕາມ.

**ມາດຕາ 31 ເນື້ອໃນການກວດກາວຽກງານ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສຳລັບທຸລະກິດກ່ຽວກັບທີ່ດິນ**

ສຳລັບທຸລະກິດກ່ຽວກັບທີ່ດິນ ທີ່ໃຫ້ການບໍລິການປະເມີນລາຄາທີ່ດິນ, ການຊື້ ຂາຍສິດນຳໃຊ້ທີ່ດິນ ແລະ ການບໍລິການຊື້ ຂາຍສິດນຳໃຊ້ທີ່ດິນ ແລະ ການບໍລິການອື່ນກ່ຽວກັບທີ່ດິນ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ກອດກາການສ້າງແຜນງານ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

2. ກວດກາໜ່ວຍງານ ແລະ ພະນັກງານຮັບຜິດຊອບ ວຽກງານ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

3. ການກວດກາ ການປະຕິບັດຫຼັກການປະເມີນ ແລະ ການບໍລິຫານຄວາມສ່ຽງ;

4. ການກວດກາ ການປະຕິບັດຕາມຫຼັກການຊອກຮູ້ລູກຄ້າ (KYC);

5. ກວດກາເບິ່ງ ວິທີການປະຕິບັດສໍາຫຼັບການເພີ່ມທະວີເອົາໃຈໃສ່ລູກຄ້າ (Customer Due Dilligence CDD);

6. ກວດກາ ການສ້າງຄູ່ມືແນະນໍາກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງ ໜ່ວຍງານບໍລິການລູກຄ້າ;

7. ກວດກາ ການບໍລິຫານຂໍ້ມູນຂ່າວສານ (MIS) ແລະ ໂປຣແກຼມການກໍານົດລູກຄ້າ (CIP);

8. ກວດກາ ການພົວພັນກັບບຸກຄົນທີ່ມີສະຖານະພາບທາງການເມືອງ;

9. ກວດກາ ການລາຍງານທຸລະກໍາທີ່ສົງໄສ (Suspicious Transaction Report-STR)

10. ກວດກາ ການເກັບຮັກສາຂໍ້ມູນ ຂອງລູກຄ້າ;

11. ກວດກາ ວຽກງານຈັດຝຶກອົບຮົມຂອງ ວິສາຫະກິດທີ່ດໍາເນີນທຸລະກິດກ່ຽວກັບທີ່ດິນ;

12. ກວດກາພາຍໃນ;

13. ກວດກາພາຍນອກ.

ມອບໃຫ້ກົມທີ່ດິນ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າສ້າງຄູ່ມືແນະນໍາ ການກວດກາ ທຸລະກິດກ່ຽວກັບທີ່ດິນ ທີ່ຕິດພັນກັບວຽກງານ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສໍາລັບ ທຸລະກິດກ່ຽວກັບທີ່ດິນ ທີ່ໃຫ້ ການບໍລິການປະເມີນລາຄາທີ່ດິນ, ການຊື້ ຂາຍສິດນໍາໃຊ້ທີ່ດິນ ແລະ ການບໍລິການຊື້ ຂາຍສິດນໍາໃຊ້ທີ່ດິນ ແລະ ການບໍລິການອື່ນກ່ຽວກັບທີ່ດິນ.

## ໝວດທີ 7
## ການກວດກາວິຊາການທຸລະກິດກ່ຽວກັບທີ່ດິນ

### ມາດຕາ 32 ການກວດກາວິຊາການທຸລະກິດກ່ຽວກັບທີ່ດິນ

ການກວດກາວິຊາການທຸລະກິດກ່ຽວກັບທີ່ດິນ ແມ່ນ ການຕິດຕາມ ກວດກາການຈັດຕັ້ງປະຕິບັດກິດຈະການທຸລະກິດກ່ຽວກັບທີ່ດິນ ຕາມເງື່ອນໄຂຂອງໃບອະນຸຍາດດໍາເນີນທຸລະກິດກ່ຽວກັບທີ່ດິນ, ບົດວິພາກເສດຖະກິດ-ເຕັກນິກ ແລະ ອື່ນໆ. ຄວາມຮັບຜິດຊອບກວດກາວິຊາການທຸລະກິດກ່ຽວກັບທີ່ດິນ ມີດັ່ງນີ້:

1. ກົມທີ່ດິນ, ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ດໍາເນີນການຕິດຕາມກວດກາເປັນປົກກະຕິ ໜຶ່ງ ຄັ້ງຕໍ່ປີ ເພື່ອຊຸກຍູ້ ແລະ ຮັບປະກັນໃຫ້ການຈັດຕັ້ງປະຕິບັດທຸລະກິດກ່ຽວກັບທີ່ດິນ ໃຫ້ມີປະສິດທິພາບ ແລ້ວລາຍງານຜົນການກວດກາໃຫ້ ລັດຖະມົນຕີກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ;

2. ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ດໍາເນີນການຕິດຕາມກວດກາເປັນປົກກະຕິ ໜຶ່ງ ຄັ້ງຕໍ່ປີ ເພື່ອຊຸກຍູ້ ແລະ ຮັບປະກັນໃຫ້ການຈັດຕັ້ງປະຕິບັດທຸລະກິດກ່ຽວກັບທີ່ດິນ ໃຫ້ມີປະສິດທິພາບ ແລ້ວລາຍງານຜົນການກວດກາໃຫ້ ທ່ານເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ກົມທີ່ດິນ, ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ.

ໃນກໍລະນີຈໍາເປັນ ແລະ ຮີບດ່ວນ ສາມາດເພີ່ມຈໍານວນຄັ້ງ ໃນການກວດກາວິຊາການທຸລະກິດກ່ຽວກັບທີ່ດິນກໍ່ໄດ້.

ສໍາລັບການກໍານົດຈໍານວນຄັ້ງ ເພື່ອດໍາເນີນການຕິດຕາມ ກວດກາທຸລະກິດກ່ຽວກັບທີ່ດິນ ທີ່ຕິດພັນກັບວຽກງານ ການຕ້ານ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ຜູ້ກໍ່ການຮ້າຍ ໄດ້ກໍານົດໄວ້ ໃນຄູ່ມືແນະນໍາສະເພາະຂອງກົມທີ່ດິນ.

**ມາດຕາ 33 ຮູບແບບການກວດກາວິຊາການທຸລະກິດກ່ຽວກັບທີ່ດິນ**

ການກວດກາວິຊາການ ທຸລະກິດກ່ຽວກັບທີ່ດິນ ປະກອບມີ ດັ່ງນີ້:

1. ກວດກາແບບປົກກະຕິ ແມ່ນ ການກວດກາທີ່ດໍາເນີນໄປຕາມແຜນການ ຢ່າງເປັນປະຈໍາ ແລະ ມີກໍານົດເວລາ ທີ່ແນ່ນອນ;
2. ກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈໍາເປັນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;
3. ການກວດກາແບບສຸກເສີນ ແມ່ນ ການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

**ມາດຕາ 34 ຂັ້ນຕອນການກວດກາວິຊາການທຸລະກິດກ່ຽວກັບທີ່ດິນ**

ການກວດກາວິຊາການທຸລະກິດກ່ຽວກັບທີ່ດິນ ປະກອບມີຂັ້ນຕອນ ດັ່ງນີ້:

1. ການກະກຽມ ແລະ ວາງແຜນການກວດກາວິຊາການທຸລະກິດກ່ຽວກັບທີ່ດິນ;
2. ການດໍາເນີນການກວດກາວິຊາການທຸລະກິດກ່ຽວກັບທີ່ດິນ;
3. ການສະຫຼຸບຜົນການກວດການວິຊາການທຸລະກິດກ່ຽວກັບທີ່ດິນ;
4. ການລາຍງານຜົນການກວດກາວິຊາການທຸລະກິດກ່ຽວກັບທີ່ດິນ.

**ມາດຕາ 35 ການກະກຽມ ແລະ ວາງແຜນການກວດກາວິຊາການທຸລະກິດກ່ຽວກັບທີ່ດິນ**

ການກະກຽມ ແລະ ວາງແຜນການກວດກາວິຊາການທຸລະກິດກ່ຽວກັບທີ່ດິນ ຕ້ອງປະຕິບັດ ດັ່ງນີ້:

1. ແຕ່ງຕັ້ງຄະນະຮັບຜິດຊອບກວດກາວິຊາການທຸລະກິດກ່ຽວກັບທີ່ດິນ;
2. ສັງລວມຂໍ້ມູນກ່ຽວກັບວິສາຫະກິດ ຈາກປຶດວິພາກເສດຖະກິດ-ເຕັກນິກ, ໃບອະນຸຍາດດໍາເນີນທຸລະກິດ, ການປະຕິບັດພັນທະ ແລະ ອື່ນໆ;
3. ສັງລວມບັນຫາຕ່າງໆ ຈາກປຶດບັນທຶກການລົງກວດກາຄັ້ງຜ່ານມາ ແລະ ຄໍາຮ້ອງຂອງປະຊາຊົນ ຕໍ່ວິສາຫະກິດດັ່ງກ່າວ;
4. ສ້າງແຜນການເຄື່ອນໄຫວ ກວດກາວິຊາການທຸລະກິດກ່ຽວກັບທີ່ດິນ, ຈັດຕັ້ງ ແລະ ແນະນໍາພະນັກງານທີ່ຖືກແຕ່ງຕັ້ງ ເພື່ອໃຫ້ກໍາແໜ້ນຈຸດປະສົງ, ລະດັບຄາດໝາຍ, ເນື້ອໃນຂອງການຕິດຕາມກວດກາວິຊາການທຸລະກິດກ່ຽວກັບທີ່ດິນ ແລະ ກໍາແໜ້ນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ພ້ອມທັງແບ່ງຄວາມຮັບຜິດຊອບໃຫ້ແຕ່ລະຄົນ;
5. ອອກແຈ້ງການ ແລະ ໜັງສືເຊີນ ຫາບັນດາຂະແໜງການທີ່ກ່ຽວຂ້ອງ ແຕ່ລະຂັ້ນເຂົ້າຮ່ວມໃນການກວດກາ;
6. ກະກຽມງົບປະມານ, ພາຫານະ ແລະ ອຸປະກອນຮັບໃຊ້ສະເພາະ ສໍາລັບການຕິດຕາມ ກວດກາ.

**ມາດຕາ 36 ການດຳເນີນການກວດກາວິຊາການທຸລະກິດກ່ຽວກັບທີ່ດິນ**

ການດຳເນີນການກວດກາວິຊາການທຸລະກິດກ່ຽວກັບທີ່ດິນ ຕ້ອງປະຕິບັດ ດັ່ງນີ້:

1. ແຈ້ງຂໍ້ຕົກລົງ ແລະ ແຜນການເຄື່ອນໄຫວການກວດກາວິຊາການທຸລະກິດກ່ຽວກັບທີ່ດິນໃຫ້ເຈົ້າຂອງວິສາຫະກິດທີ່ຢູ່ໃນເປົ້າໝາຍຂອງການກວດກາວິຊາການທຸລະກິດກ່ຽວກັບທີ່ດິນ ເພື່ອປຶກສາຫາລືເປັນເອກະພາບ, ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດ;

2. ແຈ້ງຈຸດປະສົງ ແລະ ປຶກສາຫາລືຮ່ວມກັບຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ກ່ຽວກັບແຜນການເຄື່ອນໄຫວກວດກາວິຊາການທຸລະກິດກ່ຽວກັບທີ່ດິນ;

3. ປຶກສາຫາລືກັບເຈົ້າຂອງວິສາຫະກິດເພື່ອຮັບຟັງກ່ຽວກັບສະພາບລວມໃນການຈັດຕັ້ງປະຕິບັດການດຳເນີນທຸລະກິດກ່ຽວກັບທີ່ດິນ ລວມທັງການປະຕິບັດພັນທະ, ເງື່ອນໄຂ ຂອງໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນທີ່ເຈົ້າຂອງວິສາຫະກິດຕ້ອງປະຕິບັດ;

4. ດຳເນີນການກວດກາຕົວຈິງ ຕາມເງື່ອນໄຂທີ່ກຳນົດໄວ້ໃນບົດວິພາກເສດຖະກິດ-ເຕັກນິກ ຢູ່ສຳນັກງານຫ້ອງການເປັນຕົ້ນ ການເຄື່ອນໄຫວ ແລະ ການປ່ຽນແປງກ່ຽວກັບທຶນຈົດທະບຽນ, ບັນຊີເງິນຝາກ, ຂາຮຸ້ນ, ສະຖານທີ່ປຸກສ້າງ, ວັດຖຸອຸປະກອນທີ່ນຳໃຊ້ພ້ອມທັງສອບຖາມພະນັກງານວິຊາການ, ຊ່ຽວຊານ, ກຳມະກອນ ຂອງວິສາຫະກິດດັ່ງກ່າວ ໃນການຈັດຕັ້ງປະຕິບັດໃນໄລຍະຜ່ານມາ;

5. ສະຫຼຸບຜົນການຕິດຕາມກວດກາຕົວຈິງ ເພື່ອເປັນເອກະພາບຕໍ່ບັນຫາທີ່ພົບເຫັນ ຮ່ວມກັບເຈົ້າຂອງວິສາຫະກິດ ຫຼື ຂາຮຸ້ນ ຫຼື ຜູ້ຖືຮຸ້ນ ຫຼື ຜູ້ບໍລິຫານ;

6. ຈັດກອງປະຊຸມປຶກສາຫາລື ຮ່ວມກັບເຈົ້າຂອງວິສາຫະກິດ ຫຼື ຂາຮຸ້ນ ຫຼື ຜູ້ຖືຮຸ້ນ ຫຼື ຜູ້ບໍລິຫານ ພ້ອມທັງ

7. ເຮັດບົດບັນທຶກຜົນຂອງການຕິດຕາມກວດກາວິຊາການທຸລະກິດກ່ຽວກັບທີ່ດິນ.

**ມາດຕາ 37 ການສະຫຼຸບຜົນການຕິດຕາມກວດກາວິຊາການທຸລະກິດກ່ຽວກັບທີ່ດິນ**

ການສະຫຼຸບຜົນການຕິດຕາມກວດກາວິຊາການທຸລະກິດກ່ຽວກັບທີ່ດິນ ຕ້ອງປະຕິບັດ ດັ່ງນີ້:

1. ສັງລວມບັນດາເອກະສານ, ຂໍ້ມູນ, ຫຼັກຖານຕ່າງໆ, ບົດບັນທຶກຜົນຂອງການຕິດຕາມກວດກາ ມາເປັນບົດສະຫຼຸບຜົນຂອງກາຕິດຕາມກວດກາວິຊາການທຸລະກິດກ່ຽວກັບທີ່ດິນ;

2. ຕີລາຄາ, ໄຈ້ແຍກໃຫ້ລະອຽດຈະແຈ້ງ, ດ້ານດີ, ດ້ານອ່ອນຂໍ້ຄົງຄ້າງ ພ້ອມທັງສະເໜີມາດຕະການວິທີການແກ້ໄຂບັນຫາ ຜົນຂອງການກວດກາວິຊາການທຸລະກິດກ່ຽວກັບທີ່ດິນ;

3. ຜ່ານຮ່າງບົດສະຫຼຸບຜົນຂອງການຕິດຕາມ ກວດກາ ໃນຄະນະຮັບຜິດຊອບຕິດຕາມ ກວດກາວິຊາການທຸລະກິດກ່ຽວກັບທີ່ດິນ ເພື່ອຄວາມເປັນເອກະພາບ ແລະ ຮັບຮອງ;

4. ແຈ້ງຜົນຂອງການຕິດຕາມ ກວດກາ ໃຫ້ເຈົ້າຂອງວິສາຫະກິດແກ້ໄຂບັນຫາທີ່ຍັງຄົງຄ້າງໂດຍມີກຳນົດເວລາຢ່າງຈະແຈ້ງໃນແຕ່ລະກໍລະນີ.

**ມາດຕາ 38 ການລາຍງານຜົນການຕິດຕາມກວດກາວິຊາການທຸລະກິດກ່ຽວກັບທີ່ດິນ**

ພາຍຫຼັງສຳເລັດການຕິດຕາມກວດກາແລ້ວ ຄະນະຮັບຜິດຊອບຕິດຕາມ ກວດກາວິຊາການທຸລະກິດກ່ຽວກັບທີ່ດິນ ສົ່ງບົດສະຫຼຸບຜົນຂອງການຕິດຕາມ ກວດກາ ເພື່ອລາຍງານໃຫ້ຜູ້ອອກຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບຕິດຕາມ ກວດກາວິຊາການທຸລະກິດກ່ຽວກັບທີ່ດິນ ພາຍໃນກຳນົດເວລາ ຫ້າວັນ ລັດຖະການ ນັບແຕ່ວັນສຳເລັດການຕິດຕາມ ກວດກາ ເປັນຕົ້ນໄປ.

ພາຍຫຼັງຜູ້ອອກຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບຕິດຕາມ ກວດກາວິຊາການທຸລະກິດກ່ຽວກັບທີ່ດິນ ໄດ້ຮັບການລາຍງານຜົນຂອງການຕິດຕາມ ກວດກາແລ້ວ ໃຫ້ປະຕິບັດ ດັ່ງນີ້:

1. ກົມທີ່ດິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພາຍຫຼັງສຳເລັດການກວດກາວິຊາການທຸລະກິດກ່ຽວກັບທີ່ດິນ ແຕ່ລະຄັ້ງ ຕ້ອງລາຍງານໃຫ້ການນຳກະຊວງ ພາຍໃນກຳນົດເວລາ ສິບວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບການລາຍງານ ຈາກຄະນະຮັບຜິດຊອບຕິດຕາມ ກວດກາວິຊາການທຸລະກິດກ່ຽວກັບທີ່ດິນເປັນຕົ້ນໄປ;

2. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ພາຍຫຼັງສຳເລັດການກວດກາວິຊາການທຸລະກິດກ່ຽວກັບທີ່ດິນ ແຕ່ລະຄັ້ງ ຕ້ອງລາຍງານໃຫ້ການນຳຂັ້ນແຂວງ ແລະ ກົມທີ່ດິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພາຍໃນກຳນົດເວລາ ສິບວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບການລາຍງານຈາກຄະນະຮັບຜິດຊອບຕິດຕາມ ກວດກາວິຊາການທຸລະກິດກ່ຽວກັບທີ່ດິນ ເປັນຕົ້ນໄປ.

**ມາດຕາ 39 ມາດຕະການຕໍ່ຜົນຂອງການຕິດຕາມ ກວດກາວິຊາການທຸລະກິດກ່ຽວກັບທີ່ດິນ**

ໃນກໍລະນີເຈົ້າຂອງວິສາຫະກິດ ຫຼື ຂາຮຸ້ນ ຫຼື ຜູ້ຖືຮຸ້ນ ຫຼື ຜູ້ບໍລິຫານ ຫາກແກ້ໄຂບໍ່ຖືກຕ້ອງ ຫຼື ບໍ່ແກ້ໄຂບັນຫາຕາມແຈ້ງການ ຫຼື ຜົນຂອງການຕິດຕາມ ກວດກາ ຈະຖືກປະຕິບັດມາດຕະການຕາມແຕ່ລະກໍລະນີ ດັ່ງນີ້:

1. ຖ້າແກ້ໄຂຜົນຂອງການຕິດຕາມ ກວດກາວິຊາການທຸລະກິດກ່ຽວກັບທີ່ດິນ ບໍ່ຖືກຕ້ອງຕາມການແຈ້ງການ ຫຼື ຜົນຂອງການຕິດຕາມກວດກາດັ່ງກ່າວ ຈະຖືກແຈ້ງເຕືອນເປັນລາຍລັກອັກສອນ ໂດຍກຳນົດມາດຕະການປັບປຸງ ແລະ ແກ້ໄຂຄືນໃໝ່ ພາຍໃນກຳນົດເວລາອັນແນ່ນອນຕາມແຕ່ລະກໍລະນີ ພ້ອມທັງເຮັດບັນທຶກຮ່ວມກັນໄວ້;

2. ຖ້າບໍ່ແກ້ໄຂຜົນຂອງການຕິດຕາມ ກວດກາວິຊາການທຸລະກິດກ່ຽວກັບທີ່ດິນ ຍ້ອນເຈດຕະນາ ຫຼື ເມີນເສີຍຕາມແຈ້ງການຜົນຂອງການຕິດຕາມ ກວດກາດັ່ງກ່າວ ຫຼື ຕາມແຈ້ງການເຕືອນ ທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂ້າງເທິງນີ້ ຈະຖືກປະຕິບັດມາດຕະການຕາມແຕ່ລະກໍລະນີ ດັ່ງນີ້:

- ເທື່ອທີ 1 ໃຫ້ໂຈະ ໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ ຊົ່ວຄາວ ພ້ອມທັງເຮັດບົດບັນທຶກຮ່ວມກັນໄວ້ໂດຍກຳນົດມາດຕະການໃຫ້ປັບປຸງ ແລະ ແກ້ໄຂຄືນໃໝ່ ພາຍໃນກຳນົດອັນແນ່ນອນ ຕາມແຕ່ລະກໍລະນີ;
- ເທື່ອທີ 2 ຖ້າຫາກບໍ່ປະຕິບັດຕາມກໍລະນີ ຂີດໜ້າ 1 ເທິງນີ້ ໃຫ້ຖອນໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນພ້ອມທັງສະເໜີໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ພິຈາລະນາ ຍຸບເລີກ ວິສາຫະກິດຖາວອນຕາມກົດໝາຍ ແລະ ລະບຽບການ ພ້ອມທັງຮັບຜິດຊອບຄ່າເສຍຫາຍຕົວຈິງທີ່ຕົນໄດ້ກໍ່ຂຶ້ນ.

ໃນກໍລະນີເປັນການກະທຳຜິດທາງອາຍາຈະຖືກດຳເນີນຄະດີ ແລະ ລົງໂທດຕາມປະມວນກົດໝາຍອາຍາ.

## ໝວດທີ 8
## ຄະນະກວດກາວິຊາການທຸລະກິດກ່ຽວກັບທີ່ດິນ

**ມາດຕາ 40 ຄະນະກວດກາວິຊາການທຸລະກິດກ່ຽວກັບທີ່ດິນ**

ຄະນະກວດກາວິຊາການທຸລະກິດກ່ຽວກັບທີ່ດິນ ປະກອບມີ ສອງ ຄະນະ ຄື: ຄະນະຮັບຜິດຊອບກວດກາວິຊາການທຸລະກິດກ່ຽວກັບທີ່ດິນ ແລະ ຄະນະສະເພາະກິດກວດກາວິຊາການທຸລະກິດກ່ຽວກັບທີ່ດິນ.

**ມາດຕາ 41 ການແຕ່ງຕັ້ງຄະນະຮັບຜິດຊອບກວດກາວິຊາການທຸລະກິດກ່ຽວກັບທີ່ດິນ**

ເພື່ອດຳເນີນການກວດກາວິຊາການທຸລະກິດກ່ຽວກັບທີ່ດິນ ແຕ່ລະຄັ້ງ ຕ້ອງໄດ້ຮັບການແຕ່ງຕັ້ງຈາກຫົວໜ້າ

ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຕ່ລະຂັ້ນ ດັ່ງນີ້:

1. ຫົວໜ້າກົມທີ່ດິນ ນຳສະເໜີ ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ ຄົ້ນຄວ້ານຳສະເໜີ ລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາແຕ່ງຕັ້ງຄະນະຮັບຜິດຊອບກວດກາວິຊາການທຸລະກິດກ່ຽວກັບທີ່ດິນ ຂັ້ນກະຊວງ ຊຶ່ງປະກອບມີ ຫົວໜ້າກົມ ຫຼື ຮອງຫົວໜ້າກົມ, ຫົວໜ້າພະແນກ ຫຼື ຮອງຫົວໜ້າພະແນກ ແລະ ວິຊາການທີ່ກ່ຽວຂ້ອງ ຈຳນວນໜຶ່ງ ຢູ່ພາຍໃນກົມທີ່ດິນ ເປັນກຳມະການ;

2. ຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເປັນຜູ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບກວດກາວິຊາການທຸລະກິດກ່ຽວກັບທີ່ດິນຂັ້ນແຂວງ ຕາມການສະເໜີຂອງຫົວໜ້າຂະແໜງທີ່ກ່ຽວຂ້ອງພາຍໃນພະແນກ ຊຶ່ງປະກອບມີ ຄະນະພະແນກ, ຫົວໜ້າຂະແໜງ ຫຼື ຮອງຫົວໜ້າຂະແໜງ ແລະ ວິຊາການກ່ຽວຂ້ອງ ຈຳນວນໜຶ່ງ ຢູ່ພາຍໃນພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ເປັນກຳມະການ.

ການເຄື່ອນໄຫວປະຕິບັດສິດ ແລະ ໜ້າທີ່ ຂອງຄະນະຮັບຜິດຊອບກວດກາວິຊາການ ທຸລະກິດກ່ຽວກັບທີ່ດິນ ທີ່ລົງກວດກາວິຊາການທຸລະກິດກ່ຽວກັບທີ່ດິນ ແຕ່ລະຄັ້ງ ແມ່ນ ນອນໃນຈຳນວນລາຍຊື່ຂອງຄະນະທີ່ຖືກແຕ່ງຕັ້ງ ຕາມການຕົກລົງຂ້າງເທິງນັ້ນ ໂດຍເຮັດໜ້າທີ່ໝູນວຽນກັນລົງກວດກາ ພ້ອມກັນນີ້ຄະນະດັ່ງກ່າວ ຍັງເຮັດໜ້າທີ່ກວດກາ ວຽກງານ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ຕິດພັນກັບການດຳເນີນທຸລະກິດກ່ຽວກັບທີ່ດິນ ເພື່ອຮັບປະກັນປະສິດທິພາບ ແລະ ປະສິດທິຜົນ ຂອງການກວດກາ.

## ມາດຕາ 42 ສິດ ແລະ ໜ້າທີ່ ຄະນະຮັບຜິດຊອບກວດກາວິຊາການທຸລະກິດກ່ຽວກັບທີ່ດິນ

ຄະນະຮັບຜິດຊອບກວດກາວິຊາການທຸລະກິດກ່ຽວກັບທີ່ດິນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກະກຽມ ແລະ ວາງແຜນ, ດຳເນີນການກວດກາ ແລະ ສະຫຼຸບ ແລະ ລາຍງານຜົນການກວດກາ;
2. ກວດກາເປົ້າໝາຍ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງແຕ່ງຕັ້ງຄະນະກວດກາ;
3. ກວດກາປຶ້ມບັນທຶກ, ປຶ້ມບັນຊີ, ເອກະສານ, ຂໍ້ມູນທາງເອເລັກໂຕຣນິກ ແລະ ບົດບັນທຶກຕ່າງໆ ກ່ຽວກັບການດຳເນີນທຸລະກິດກ່ຽວກັບທີ່ດິນ ຂອງເປົ້າໝາຍກວດກາ;
4. ຮຽກເອົາຂໍ້ມູນ ແລະ ເອກະສານທີ່ກ່ຽວຂ້ອງເພີ່ມເຕີມ ຈາກເປົ້າໝາຍກວດກາ;
5. ຮຽກ ຫຼື ເຊີນ ຄະນະຜູ້ບໍລິຫານ, ພະນັກງານທີ່ກ່ຽວຂ້ອງ ເຂົ້າມາໃຫ້ຂໍ້ມູນກ່ຽວກັບການກວດກາ;
6. ຮັກສາຄວາມລັບຂອງເປົ້າໝາຍກວດກາທີ່ຕົນໄດ້ຮູ້ ກ່ອນ ແລະ ຫຼັງຈາກສຳເລັດ ການກວດກາ;
7. ສະເໜີໃຫ້ພິຈາລະນາ ແລະ ແກ້ໄຂຜົນຂອງການກວດກາ ຕາມທີ່ກຳນົດໄວ້ໃນມາດຕາ 38 ແລະ 39 ຂອງຂໍ້ຕົກລົງສະບັບນີ້;
8. ປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມກົດໝາຍ, ລະບຽບການ ແລະ ການມອບໝາຍຂອງຂັ້ນເທິງ.

## ມາດຕາ 43 ສິດ ແລະ ໜ້າທີ່ ຂອງຫົວໜ້າຄະນະຮັບຜິດຊອບກວດກາວິຊາການທຸລະກິດກ່ຽວກັບທີ່ດິນ

ຫົວໜ້າຄະນະຮັບຜິດຊອບກວດກາວິຊາການທຸລະກິດກ່ຽວກັບທີ່ດິນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງ, ຊີ້ນຳກຳມະການໃນຄະນະກວດກາປະຕິບັດໃຫ້ຖືກຕ້ອງຕາມຈຸດປະສົງ, ລະດັບຄາດໝາຍ, ເນື້ອໃນ ແລະ ກຳນົດເວລາຂອງການກວດກາ;

2. ສະເໜີຄໍາເຫັນຕໍ່ຜູ້ຕົກລົງແຕ່ງຕັ້ງຄະນະກວດກາວິຊາການທຸລະກິດກ່ຽວກັບທີ່ດິນ, ນໍາໃຊ້ມາດຕະການ ເພື່ອຮັບປະກັນການປະຕິບັດໜ້າທີ່ຂອງຄະນະດັ່ງກ່າວ;

3. ສະເໜີໃຫ້ວິສາຫະກິດ ສະໜອງຂໍ້ມູນ, ເອກະສານ, ລາຍງານເປັນລາຍລັກອັກສອນ, ອະທິບາຍກ່ຽວກັບບັນຫາທີ່ພົວພັນກັບເນື້ອໃນຂອງການກວດກາ;

4. ສະເໜີໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ສະໜອງຂໍ້ມູນ, ເອກະສານ ທີ່ພົວພັນກັບເນື້ອໃນກວດກາ;

5. ສະເໜີໂຈະ ຫຼື ຖອນໃບອະນຸຍາດດໍາເນີນທຸລະກິດກ່ຽວກັບທີ່ດິນ ເມື່ອມີການລະເມີດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ;

6. ລາຍງານຜົນຂອງການກວດກາຕໍ່ຜູ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບກວດກາວິຊາການທຸລະກິດກ່ຽວກັບທີ່ດິນ ຕາມທີ່ໄດ້ກໍານົດໃນມາດຕາ 31 ຂອງຂໍ້ຕົກລົງສະບັບນີ້ ແລະ ຕ້ອງຮັບຜິດຊອບກ່ຽວກັບການລາຍງານຂອງຕົນ;

7. ຮັກສາຄວາມລັບຂອງເປົ້າໝາຍກວດກາທີ່ຕົນໄດ້ຮູ້ ກ່ອນ ແລະ ຫຼັງຈາກສໍາເລັດ ການກວດກາ;

8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມກົດໝາຍ, ລະບຽບການ ແລະ ການມອບໝາຍຂອງຂັ້ນເທິງ.

**ມາດຕາ 44 ຄະນະສະເພາະກິດກວດກາວິຊາການທຸລະກິດກ່ຽວກັບທີ່ດິນ**

ຄະນະສະເພາະກິດກວດກາວິຊາການທຸລະກິດກ່ຽວກັບທີ່ດິນແມ່ນ ຄະນະທີ່ໄດ້ຮັບການແຕ່ງຕັ້ງຂຶ້ນ ເພື່ອຕິດຕາມກວດກາທຸລະກິດກ່ຽວກັບທີ່ດິນ ໃນກໍລະນີເກີດເຫດການສຸກເສີນ ແລະ ຕາມຄວາມຈໍາເປັນ. ຄະນະດັ່ງກ່າວ ດໍາເນີນການກວດກາວິຊາການທຸລະກິດກ່ຽວກັບທີ່ດິນຄືກັບຂັ້ນຕອນການກວດກາ ຂອງຄະນະຮັບຜິດຊອບກວດກາວິຊາການທຸລະກິດກ່ຽວກັບທີ່ດິນຕາມທີ່ໄດ້ກໍານົດໄວ້ ໃນມາດຕາ 27, 28, 29, 30 ແລະ 31 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 45 ການແຕ່ງຕັ້ງຄະນະສະເພາະກິດກວດກາວິຊາການທຸລະກິດກ່ຽວກັບທີ່ດິນ**

ເພື່ອດໍາເນີນການກວດກາວິຊາການທຸລະກິດກ່ຽວກັບທີ່ດິນບັນຫາໃດໜຶ່ງທີ່ເຫັນວ່າ ມີຄວາມຫຍຸ້ງຍາກສັບສົນ, ເກີດມີເຫດການສຸກເສີນ ຄະນະສະເພາະກິດກວດກາວິຊາການທຸລະກິດກ່ຽວກັບທີ່ດິນແຕ່ລະຂັ້ນຖືກແຕ່ງຕັ້ງຂຶ້ນ ດັ່ງນີ້:

1. ຫົວໜ້າກົມທີ່ດິນ ນໍາສະເໜີ ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ ຄົ້ນຄວ້ານໍາສະເໜີ ລັດຖະມົນຕີກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ພິຈາລະນາແຕ່ງຕັ້ງຄະນະສະເພາະກິດທຸລະກິດກ່ຽວກັບທີ່ດິນ ຂັ້ນກະຊວງ ຊຶ່ງປະກອບມີ ຫົວໜ້າກົມ ຫຼື ຮອງຫົວໜ້າກົມ, ຫົວໜ້າພະແນກ ຫຼື ຮອງຫົວໜ້າພະແນກ ແລະ ວິຊາການທີ່ກ່ຽວຂ້ອງ ຈໍານວນໜຶ່ງ ຢູ່ພາຍໃນກົມທີ່ດິນ ແລະ ຜູ້ຕາງໜ້າກົມກອງກ່ຽວຂ້ອງພາຍໃນກະຊວງ, ຕາງໜ້າກະຊວງກ່ຽວຂ້ອງ ແລະ ວິຊາການ ຈໍານວນໜຶ່ງ ເປັນກໍາມະການ;

2. ຫົວໜ້າພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ນໍາສະເໜີເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເພື່ອພິຈາລະນາແຕ່ງຕັ້ງຄະນະສະເພາະກິດກວດກາທຸລະກິດກ່ຽວກັບທີ່ດິນ ຂັ້ນແຂວງ ຕາມການສະເໜີຂອງຫົວໜ້າ ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ຊຶ່ງປະກອບມີ ຫົວໜ້າພະແນກ ຫຼື ຮອງຫົວໜ້າພະແນກ, ຫົວໜ້າຂະແໜງ ຫຼື ຮອງຫົວໜ້າຂະແໜງ, ຜູ້ຕາງໜ້າຂະແໜງກ່ຽວຂ້ອງພາຍໃນພະແນກ, ຕາງໜ້າພະແນກການອື່ນທີ່ກ່ຽວຂ້ອງ ແລະ ວິຊາການຈໍານວນໜຶ່ງ ເປັນກໍາມະການ.

**ມາດຕາ 46 ສິດ ແລະ ໜ້າທີ່ ຄະນະສະເພາະກິດກວດກາວິຊາການທຸລະກິດກ່ຽວກັບທີ່ດິນ**

ຄະນະສະເພາະກິດກວດກາວິຊາການທຸລະກິດກ່ຽວກັບທີ່ດິນ ແລະ ຫົວໜ້າຄະນະສະເພາະກິດດັ່ງກ່າວ ມີສິດ ແລະ ໜ້າທີ່ ຄືກັບຄະນະຮັບຜິດຊອບກວດກາວິຊາການທຸລະກິດກ່ຽວກັບທີ່ດິນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 42 ແລະ 43 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 9
## ການຊຳລະເງິນໃນການຊື້ ຂາຍ ສິດນຳໃຊ້ທີ່ດິນ ຜ່ານລະບົບທະນາຄານ ແລະ ຄ່າທຳນຽມ ແລະ ຄ່າບໍລິການ

**ມາດຕາ 47 ການຊຳລະເງິນໃນການ ຊື້ ຂາຍສິດນຳໃຊ້ທີ່ດິນຜ່ານລະບົບທະນາຄານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ຊື້ ຂາຍ ສິດນຳໃຊ້ທີ່ດິນກັບຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ ຕ້ອງໄດ້ຜ່ານລະບົບທະນາຄານ ເພື່ອຄວາມຖືກຕ້ອງ, ໂປ່ງໃສ, ຮັບປະກັນການເກັບລາຍຮັບເຂົ້າງົບປະມານແຫ່ງລັດ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 48 ຄ່າທຳນຽມ ແລະ ຄ່າບໍລິການ**

ການເກັບຄ່າທຳນຽມ ແລະ ຄ່າບໍລິການ ໃນການດຳເນີນທຸລະກິດກ່ຽວກັບທີ່ດິນ ໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 002/ປປທ, ລົງວັນທີ 17 ມິຖຸນາ 2021 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ.

## ໝວດທີ 10
## ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ

**ມາດຕາ 49 ສິດ ຂອງຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ**

ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນມີສິດ ດັ່ງນີ້:

1. ໂຄສະນາ ແລະ ເຜີຍແຜ່ ການດຳເນີນທຸລະກິດກ່ຽວກັບທີ່ດິນຂອງຕົນ ຕາມກົດໝາຍ ແລະ ລະບຽບການ;
2. ປະສານສົມທົບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ໃນການດຳເນີນທຸລະກິດກ່ຽວກັບທີ່ດິນ;
3. ທວງເອົາເອກະສານ, ສອບຖາມ, ຂໍຂໍ້ມູນ ແລະ ລາຍລະອຽດຕ່າງໆ ກ່ຽວກັບການດຳເນີນທຸລະກິດກ່ຽວກັບທີ່ດິນ ນຳຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;
4. ບໍລິການສຳຫຼວດ-ວັດແທກ, ການຊື້ ຂາຍສິດນຳໃຊ້ທີ່ດິນ, ປະເມີນລາຄາທີ່ດິນ ແລະ ການບໍລິການອື່ນ ຕາມໃບອະນຸຍາດດຳເນີນທຸລະກິດກ່ຽວກັບທີ່ດິນ;
5. ປົກປ້ອງ ແລະ ສະເໜີ ຂໍຄວາມເປັນທຳ ຕໍ່ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ເພື່ອແກ້ໄຂບັນຫາ ທີ່ແຕະຕ້ອງເຖິງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ;
6. ລາຍງານກ່ຽວກັບການປະຕິບັດໜ້າທີ່ຂອງຄະນະກວດກາ ພ້ອມທັງສະເໜີປ່ຽນຄະນະກວດກາ ເມື່ອເຫັນວ່າຄະນະດັ່ງກ່າວປະຕິບັດ ສິດ ແລະ ໜ້າທີ່ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ;

7. ປັບປຸງ ຫຼື ປ່ຽນແປງເນື້ອໃນບົດສະຫຼຸບຜົນການກວດກາ ເມື່ອເຫັນວ່າເນື້ອໃນຂອງບົດສະຫຼຸບດັ່ງກ່າວ ບໍ່ສອດຄ່ອງກັບຄວາມເປັນຈິງ;

8. ນຳໃຊ້ສິດອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 50 ພັນທະ ຂອງຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນ**

ຜູ້ດຳເນີນທຸລະກິດກ່ຽວກັບທີ່ດິນມີພັນທະ ດັ່ງນີ້:

1. ປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບການດຳເນີນທຸລະກິດກ່ຽວກັບທີ່ດິນ;

2. ຮັບຜິດຊອບທົດແທນຄ່າເສຍຫາຍ ທີ່ເກີດຂຶ້ນຈາກການດຳເນີນທຸລະກິດກ່ຽວກັບທີ່ດິນຂອງຕົນ;

3. ໃຫ້ການຮ່ວມມື, ອຳນວຍຄວາມສະດວກ ແລະ ສະໜອງຂໍ້ມູນກ່ຽວກັບ ການດຳເນີນທຸລະກິດກ່ຽວກັບທີ່ດິນ ໃຫ້ພະນັກງານຕິດຕາມກວດກາວິຊາການກ່ຽວກັບທີ່ດິນ ຫຼື ອົງການຄຸ້ມຄອງທີ່ກ່ຽວຂ້ອງ;

4. ອະທິບາຍ, ຊີ້ແຈງທຸກບັນຫາ ທີ່ພົວພັນເຖິງເນື້ອໃນຂອງການກວດກາ ຕາມການສະເໜີຂອງຄະນະກວດກາ;

5. ຮັບຜິດຊອບຕໍ່ຂໍ້ມູນທີ່ລະບຸໃສ່ໃນສັນຍາ ແລະ ແບບພິມຕ່າງໆ ກ່ຽວກັບການດຳເນີນທຸລະກິດກ່ຽວກັບທີ່ດິນ;

6. ເສຍອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ຕາມກົດໝາຍ ແລະ ລະບຽບການ;

7. ບໍ່ລະເມີດສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ;

8. ແກ້ໄຂຄຳສະເໜີ ຂອງຜູ້ໄດ້ຮັບຜົນກະທົບ ທີ່ເກີດຈາກການດຳເນີນທຸລະກິດກ່ຽວກັບທີ່ດິນ;

9. ລາຍງານຜົນຂອງການເຄື່ອນໄຫວການດຳເນີນທຸລະກິດກ່ຽວກັບທີ່ດິນ ທຸກສາມເດືອນ ສົ່ງໃຫ້ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;

10. ລາຍງານຜົນຂອງການປັບປຸງ ແລະ ແກ້ໄຂບັນຫາ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 8 ຂອງມາດຕານີ້ໃນແຕ່ລະໄລຍະ;

11. ສ້າງ ຫຼື ປັບປຸງ ນະໂຍບາຍພາຍໃນວິສາຫະກິດ ເພື່ອຈັດຕັ້ງປະຕິບັດສິດ ແລະ ພັນທະ ຕາມທີ່ໄດ້ກຳນົດໃນ ກົດໝາຍ ວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ພ້ອມທັງລາຍງານ ທຸກໆໜຶ່ງປີ ຫຼື ລາຍງານຕາມໜັງສືແຈ້ງການ ໃຫ້ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສຳລັບ ທຸລະກິດກ່ຽວກັບທີ່ດິນ ທີ່ໃຫ້ການບໍລິການປະເມີນລາຄາທີ່ດິນ, ການຊື້ ຂາຍສິດນຳໃຊ້ທີ່ດິນ ແລະ ການບໍລິການຊື້ ຂາຍສິດນຳໃຊ້ທີ່ດິນ ແລະ ການບໍລິການອື່ນກ່ຽວກັບທີ່ດິນ;

12. ປັບປຸງ ແລະ ແກ້ໄຂບັນຫາ ຕໍ່ຜົນຂອງການຕິດຕາມກວດກາ ທຸລະກິດກ່ຽວກັບທີ່ດິນ ທີ່ຕິດພັນກັບວຽກງານ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມທີ່ໄດ້ກຳນົດໃນບົດບັນທຶກການຕິດຕາມກວດກາ ໃນແຕ່ລະໄລຍະ;

13. ປະຕິບັດພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

# ໝວດທີ 11
# ບົດບັນຍັດສຸດທ້າຍ

**ມາດຕາ 51 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມທີ່ດິນ, ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ ແລະ ໄດ້ຮັບຜົນດີ;

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 52 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ມອບໃຫ້ກົມທີ່ດິນ ແລະ ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຂັ້ນແຂວງ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກວດກາຄືນບັນດາວິສາຫະກິດ ທີ່ດໍາເນີນທຸລະກິດກ່ຽວກັບທີ່ດິນ ທີ່ຍັງບໍ່ໄດ້ຮັບອະນຸຍາດໃຫ້ດໍາເນີນທຸລະກິດກ່ຽວກັບທີ່ດິນໃນໄລຍະຜ່ານມາ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ພ້ອມທັງແຈ້ງໃຫ້ເຈົ້າຂອງຜູ້ດໍາເນີນທຸລະກິດດັ່ງກ່າວ ແຈ້ງຂຶ້ນທະບຽນວິສາຫະກິດ ຈາກຂະແໜງການອຸດສາຫະກໍາ ແລະ ການຄ້າ ແລະ ຂໍອະນຸຍາດດໍາເນີນທຸລະກິດກ່ຽວກັບທີ່ດິນ ຈາກຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ໃຫ້ສໍາເລັດພາຍໃນກໍານົດເວລາ ຫົກເດືອນ ນັບແຕ່ໄດ້ຮັບແຈ້ງການ ເປັນຕົ້ນໄປ.

ຖ້າຫາກວ່າວິສາຫະກິດໃດ ບໍ່ປະຕິບັດຕາມແຈ້ງການ ຂອງຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ພາຍໃນກໍານົດເວລາ ຫົກເດືອນ ຈະຖືກສຶກສາອົບຮົມ, ກ່າວເຕືອນ ພ້ອມທັງສະເໜີອົງການກ່ຽວຂ້ອງດໍາເນີນການລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກດໍາເນີນຄະດີອາຍາ ຕາມກົດໝາຍ.

ຂໍ້ກໍານົດໃດທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ອນແຕ່ຖືກຍົກເລີກ.

**ລັດຖະມົນຕີ**

ນ.ບຸນຄໍາ ວໍລະຈິດ